


## ຟີລິບປິນ

**ເຂົ້າຮ່ວມອາຊຽນ:** 8 ສິງຫາ 1967

**ນະຄອນຫຼວງ:** ມະນີລາ

**ປະຊາກອນ:** 97 ລ້ານ ຄົນ

**ເນື້ອທີ່:** 300,000 ກມ$^2$

**ຄວາມໜາແໜ້ນ:** 320 ຄົນ/ກມ$^2$

**ອາຍຸປານກາງ:** 22.9 ປີ

**ສາສະໜາ:** ເກືອບ 85% ເປັນຊາວຄຣິສຕຽນ. ມີຊາວມຸດສະລິມຈຳນວນໜຶ່ງ ຫຼື ຜູ້ນາຝຶກສາສະໜາ. ສ່ວນຊາວພຸດແມ່ນມີໜ້ອຍດຽວເທົ່ານັ້ນ.

**ພາສາ:** ພາສາທະກາລັອກ (ພາສາຟີລິບປິນ) ແລະ ອັງກິດ ເປັນທາງການ ເຊິ່ງມີ 8 ພາສາທ້ອງຖິ່ນສ່ວນໃຫຍ່ຂອງພາສາທາກະລັອກ.

**ເສດຖະກິດ:** ເສດຖະກິດຊຸດໂຊມລົງຊ່ວງລະບອບກິນສິນບົນຂອງອະດີດປະທານປະເທດມາໂກສ, ແລ້ວມັນກໍ່ຟື້ນຟູຄືນມາຊ້າໆ. ປະຈຸບັນຫຼາຍຄົນໃນຟີລິບປິນຂຶ້ນກັບການສົ່ງເງິນຈາກພີ່ນ້ອງທີ່ຍ້າຍໄປຕ່າງປະເທດ ເພື່ອຊອກຫາວຽກເຮັດງານທຳ. ຖ້າມັນສາມາດກາຍມາເປັນຄວາມໝັ້ນຄົງທາງການເມືອງ ຟີລິບປິນກໍ່ອາດຈະກາຍມາເປັນໜຶ່ງໃນເອເຊຍທີ່ມີເສດຖະກິດເຂັ້ມແຂງທີ່ສຸດອີກຄັ້ງໄດ້.

**ລາຍໄດ້ຕໍ່ຄົນ:** $1,790 (US)

**ລາຍໄດ້ປຽບທຽບຕໍ່ຄົນ:** $3,500 (US)

**ລະດັບລາຍໄດ້ປຽບທຽບ:** 162

**ສຳປະສິດຈີນີ:** 45.8

# ຟີລິບປິນ



Wng CC-BY-SA 3

## ດິນແດນທີ່ມີເກາະຫຼາຍ

ປະເທດຟີລິບປິນເປັນໝູ່ເກາະຫຼາຍກວ່າ 7,000 ເກາະ. ເກາະທີ່ໃຫຍ່ທີ່ສຸດຍາວປະມານ 800 ກມ. ເນັ່ງຈາກຝັ່ງທະເລເອເຊຍຕາເວັນອອກສ່ຽງໃຕ້ ແຕ່ເກາະນ້ອຍບາງຈຳນວນຢູ່ໃກ້ກັບມາເລເຊຍ ແລະ ອິນໂດເນເຊຍ. ປະມານ 2/3 ຂອງພື້ນທີ່ຟີລິບປິນ ແມ່ນຢູ່ນຳສອງເກາະນີ້ຄື: ເກາະລູຊອນ ທາງພາກເໜືອ ແລະ ມິນດາເນົາ ທາງພາກໃຕ້.

ຟີລິບປິນຕັ້ງຢູ່ໃນວົງແຫວນໄຟ ເຊິ່ງເປັນວົງລັດສະໝີທີ່ແຜ່ນດິນໄຫວ ແລະ ພູເຂົາໄຟລະເບີດເປັນເລື່ອງປົກກະຕິ. ເກາະສ່ວນຫຼາຍກໍ່ຕົວຂຶ້ນຈາກເທົ່າຖ່ານ ແລະ ຕົມຂອງພູເຂົາໄຟດົນນານມາແລ້ວ. ໃນອະດີດ ພວກມັນຖືກປົກຄຸມດ້ວຍປ່າຝົນ (ປ່າດົບ) ແຕ່ວ່າປ່າຫຼາຍແຫ່ງຖືກຕັດຍ້ອນຂາດການຄວບຄຸມການຕັດໄມ້ທ່ອນ. ແຜ່ນດິນໄຫວເປັນເລື່ອງທົ່ວໄປ ແລະ ພູເຂົາໄຟຍັງຄົງລະເບີດຢູ່ຈຳນວນໜຶ່ງ.

ຮູບເທິງ: ໃນວັນທີ 27 ເດືອນ ເມສາ ປີ 1521, ກຸ່ມທະຫານຂອງປະເທດປອກຕຸຍການໄດ້ເຂົ້າໂຈມຕີເກາະໜຶ່ງຂອງຟີລິບປິນ. ຜູ້ນຳເກາະຄື ລາປູລາປູ, ໄດ້ນຳພານັກຮົບຂອງຕົນອອກໄປຕໍ່ສູ້ຕ້ານກັບທະຫານປອກຕຸຍການ. ພວກເຂົາໄດ້ຂ້າຜູ້ນຳ ແລະ ທະຫານປອກຕຸຍການຈຳນວນຫຼາຍຕາຍ. ຮູບປັ້ນນີ້ຈຶ່ງຖືກຕັ້ງໄວ້ເພື່ອເປັນກຽດແກ່ ລາປູລາປູ, ວິລະບຸລຸດຜູ້ທຳອິດແຫ່ງປະເທດຟີລິບປິນ, ເພື່ອຕໍ່ຕ້ານລະບອບຈັກກະພັດນິຍົມແຫ່ງເອີຣົບ.

# ປະຫວັດສາດ



ມີບາງຊົນເຜົ່າພື້ນເມືອງໃນຟີລິບປິນແມ່ນພວກລ່າຫົວມະນຸດ. ຮູບພາບນີ້ແຕ້ມຂຶ້ນໄດ້ປະມານ 200 ປີມາແລ້ວ.

ບາງເກາະໃນຟີລິບປິນໄດ້ມີຄົນມາອາໄສຢູ່ນັບເປັນເວລາຫຼາຍກວ່າ 50,000 ປີມາແລ້ວ. ໃນ ສະຕະວັດທີ 8 ຊາວຄ້າຂາຍຈີນມາຮອດ ແລະ ມີຫຼາຍຄົນໄດ້ອາໄສຢູ່ທີ່ນັ້ນ. ຜູ້ມາອາໄສກຸ່ມທຳອິດອີກແມ່ນມາຈາກເອເຊຍຕາເວັນອອກສ່ຽງໃຕ້ ແລະຈາກບັນດາປະເທດໃນແຖບອາຣັບ. ໄລຍະນີ້ ຟີລິບປິນໄດ້ເຊື່ອຖືຫຼາຍສາສະໜາປະສົມປະສານກັນ ເຊັ່ນ: ເຊື່ອຖືວິນຍານ, ອິສລາມ ແລະ ພຸດທະສາສະໜາ.

ໃນສະຕະວັດທີ 16 ເຮືອຂອງ ແອັດສະປາຍມາຮອດ. ທະຫານແອັດສະປາຍໄດ້ຍຶດອຳນາດຄອບຄອງເກາະ ແລະເຮັດໃຫ້ຟີລິບປິນເປັນຫົວເມືອງຂຶ້ນຂອງພວກເຂົາ. ແອັດສະປາຍພະຍາຍາມເຮັດໃຫ້ຄົນທ້ອງຖິ່ນໃຊ້ພາສາ ແລະ ສາສະໜາຂອງພວກເຂົາ ຄື ສາສະໜາຄຣິສຕຽນ. ພະນັກງານລັດຂອງແອັດສະປາຍ ຍັງໃຫ້ຄົນທ້ອງຖິ່ນນຳໃຊ້ນາມສະກຸນແບບແອັດສະປາຍ. ປະຈຸບັນ ຄົນຟີລິບປິນເກືອບທັງໝົດຍັງໃຊ້ນາມສະກຸນແບບແອັດສະປາຍ ເຖິງແມ່ນວ່າ ບັນພະບູລຸດຂອງພວກເຂົາທັງໝົດແມ່ນຄົນເອເຊຍ. ມີຫຼາຍຖະໜົນ, ຕົວເມືອງ ແລະ ແຂວງ ທີ່ຍັງຄົງໃຊ້ຊື່ແບບແອັດສະປາຍ. ແມ່ນແຕ່ຊື່ປະເທດ ກໍ່ຍັງແມ່ນຊື່ແອັດສະປາຍ ຄື ຊື່ຂອງກະສັດ ຟີລິບ 2 ຂອງແອັດສະປາຍ.



Mark Navales CC-BY-2.0

ປະເພນີຂອງຊາວຕາເວັນຕົກໄດ້ເຂົ້າມາທັບຖົມປະເພນີພື້ນເມືອງຂອງຟີລິບປິນຫຼາຍ, ແຕ່ການນຸ່ງຖື ແລະ ການຟ້ອນພື້ນເມືອງຍັງຄົງມີໃຫ້ເຫັນໃນງານບຸນຕ່າງໆ.

ຫຼາຍຄັ້ງ ຄົນຟີລິບປິນກໍ່ການຈະລາຈົນ ແຕ່ກອງທັບແອັດສະປາຍກໍ່ຍັງເຂັ້ມແຂງເກີນໄປ. ໃນປີ 1898 ກອງທັບເຮືອ ສະຫະລັດອະເມຣິກາໄດ້ໃຫ້ການຊ່ວຍເຫຼືອຄົນຟີລິບປິນກໍ່ການກະບົດ ເພື່ອເອົາຊະນະແອັດສະປາຍ. ຟີລິບປິນປະກາດເອກະລາດໃນປີ 1898 ແຕ່ສະຫະລັດອາເມຣິກາມີແນວຄິດອື່ນອີກ: ສະຫະລັດອາເມຣິກາເອົາເງິນຈຳນວນ 20 ລ້ານ ໂດລາ ໃຫ້ແອັດສະປາຍ ແລະປະກາດວ່າ ພວກເຂົາໄດ້ຊື້ເອົາປະເທດຟີລິບປິນແລ້ວ. ລະຫວ່າງ 15 ປີຕໍ່ມາ ຄົນຟີລິບປິນເກືອບໜຶ່ງລ້ານຄົນລົ້ມຕາຍຂະນະທີ່ຕໍ່ສູ້ເພື່ອອິດສະລະພາບຂອງພວກເຂົາຕ້ານກັບສະຫະລັດອະເມຣິກາ. ພວກເຂົາພ່າຍແພ້ ແລະຈົນເຖິງ ປີ 1946 ຟີລິບປິນໄດ້ກາຍເປັນຫົວເມືອງຂຶ້ນຂອງສະຫະລັດອາເມຣິກາ.

# ໂຈເສ ຣິຊານ: ວິລະບຸລຸດ ຟິລິບປິນ

ໂຈເສ ຣິຊານ ເກີດໃນຟິລິບປິນ. ເມື່ອເປັນໜຸ່ມ ລາວໄດ້ໄປປະເທດແອັດສະປາຍ ເພື່ອຮ່ຳຮຽນ. ເວລານັ້ນ ຟິລິບປິນເປັນຫົວເມືອງຂຶ້ນຂອງແອັດສະປາຍ ແລະບໍ່ດົນ ຣິຊານກໍ່ເຂົ້າໃຈວ່າປະຊາຊົນໃນປະເທດຂອງລາວກຳລັງຖືກປະຕິບັດຢ່າງບໍ່ເປັນທຳ ໂດຍຄົນແອັດສະປາຍ. ລາວທວງຖາມລັດຖະບານແອັດສະປາຍ ເພື່ອໃຫ້ຄົນຟິລິບປິນມີສິດອອກສຽງຫຼາຍຂຶ້ນໃນລັດຖະບານຂອງພວກເຂົາ ແຕ່ ແອັດສະປາຍປະຕິເສດ. ໂຈເສ ກັບມາປະເທດຂອງລາວ ແລະສືບຕໍ່ພະຍາຍາມປະຕິຮູບລັດຖະບານຄືນໃໝ່.



ຜູ້ນຳແອັດສະປາຍເວົ້າຕົວະກ່ຽວກັບສິ່ງທີ່ລາວກຳລັງເຮັດ ແລ້ວພວກເຂົາກໍ່ຈັບລາວໃນຂໍ້ຫາກະບົດຂາຍຊາດ ແລະປະຫານລາວໃນປີ 1896 ເມື່ອລາວອາຍຸໄດ້ 35 ປີ.

ຣິຊານ ບໍ່ເຄີຍໂຄສະນາສິ່ງເສີມອິດສະລະພາບໃຫ້ແກ່ຟິລິບປິນ, ລາວພຽງເວົ້າວ່າ ຄົນຟິລິບປິນຄວນຈະໄດ້ຮັບສິດອອກສຽງຫຼາຍຂຶ້ນໃນລັດຖະບານຂອງພວກເຂົາ. ແຕ່ຫຼັງຈາກການຖືກປະຫານຊີວິດຂອງລາວ ຊາວຟິລິບປິນຫຼາຍຄົນໄດ້ຕໍ່ສູ້ໜັກຂຶ້ນເພື່ອອິດສະລະພາບຈາກແອັດສະປາຍ.

ສະຫະລັດອາເມຣິກາໄດ້ຈັດຕັ້ງໂຮງຮຽນບໍ່ເສຍຄ່າ ທີ່ຖືກໃຊ້ເພື່ອເຜີຍແຜ່ພາສາອັງກິດ ແລະ ແນວຄິດຂອງອາເມຣິກາ. ການສຶກສາທີ່ເພີ່ມຂຶ້ນໄດ້ຊ່ວຍເຫຼືອຄົນຟິລິບປິນ ແຕ່ພວກເຂົາກໍ່ໄດ້ສູນເສຍວັດທະນະທຳຟິລິບປິນໄປ. ຜົນກໍ່ຄື ປະຈຸບັນນີ້ ປະເທດຟິລິບປິນຖືວ່າ ເປັນປະເທດທີ່ມີວັດທະນະທຳຕາເວັນຕົກຫຼາຍທີ່ສຸດໃນບັນດາປະເທດເອເຊຍຕາເວັນອອກສ່ຽງໃຕ້. ຮູບເງົາ, ກິລາ ແລະດົນຕີແບບອາເມຣິກາເປັນທີ່ນິຍົມກັນຫຼາຍກວ່າຂອງທ້ອງຖິ່ນ. ເພາະອິດທິພົນຂອງແອັດສະປາຍ ແລະ ອາເມຣິກາ ຟິລິບປິນຈຶ່ງເປັນປະເທດດຽວໃນປະເທດອາຊຽນທີ່ຄົນສ່ວນຫຼາຍຖືສາສະໜາຄິດສຕຽນ.

ຄືກັນກັບຫຼາຍປະເທດຫົວເມືອງຂຶ້ນໃນເອເຊຍ ຄົນຟິລິບປິນໄດ້ຮັບອິດສະລະພາບໃນປີ 1946 ຫຼັງຈາກສົງຄາມໂລກຄັ້ງທີ II. ນະຄອນຫຼວງ ແລະ ປະເທດອື່ນຫຼາຍປະເທດ ເກືອບວ່າຖືກທຳລາຍໄປຍ້ອນສົງຄາມ. ໃນການຕອບແທນ ທີ່ໃຫ້ເປັນອິດສະລະພາບ. ສະຫະລັດ ຮຽກຮ້ອງ



Marco Severo M. Palinar CC-BY-SA 3.0

ມະຫາວິທະຍາໄລ ຊັນໂຕ ໂທມາສ ໄດ້ຖືກສ້າງຕັ້ງຂຶ້ນຢູ່ປະເທດຟິລິບປິນ ໃນປີ 1611. ເຊິ່ງເປັນມະຫາວິທະຍາໄລທີ່ເກົ່າແກ່ທີ່ສຸດໃນເອເຊຍ.

## ການລະເບີດທີ່ຮຸນແຮງ - ທະເລສາບທີ່ສວຍງາມ





by ChrisTomnong CC-BY-SA 3.0

ໃນປີ 1991 ມີພູເຂົາໄຟໜ່ວຍໜຶ່ງຊື່ວ່າ ປີນາຕູໂບ (Mount Pinatubo) ໄດ້ລະເບີດຂຶ້ນໃນປະເທດຟີລິບປິນ. ມັນເປັນການລະເບີດຂອງພູເຂົາໄຟທີ່ໃຫຍ່ທີ່ສຸດໃນໂລກ ຫຼັງຈາກການລະເບີດຂອງພູເຂົາໄຟຢູ່ອາເມຣິກາ ໃນປີ 1912. ຫີນ ແລະ ຂີ້ດິນຈຳນວນຫຼາຍໄດ້ພຸ່ງຂຶ້ນເທິງອາກາດ ແລະ ຖ້າມັນຕົກລົງມາໃສ່ເນື້ອທີ່ຂອງແຂວງຫຼວງພະບາງ ມັນຈະເຮັດໃຫ້ແຂວງຫຼວງພະບາງສູງຂຶ້ນອີກໜຶ່ງແມັດ.

ເມື່ອກ້ອນຫີນ ແລະ ລາວາເຫຼົ່ານັ້ນໄຫຼຕົກລົງມາ, ນ້ຳໜັກຂອງພວກມັນໄດ້ເຮັດໃຫ້ເຮືອນຫຼາຍຫຼັງເສຍຫາຍ, ທັງໄດ້ຂ້າຜູ້ຄົນທີ່ຢູ່ໃນເຮືອນນັ້ນດ້ວຍ. ມີຜູ້ເສຍຊີວິດຫຼາຍກວ່າ 800 ຄົນ. ຂີ້ເທົ່າຈາກພູເຂົາໄຟໄດ້ກະຈາຍໄປໄກທີ່ສຸດຈົນຮອດປະເທດຫວຽດນາມ.

ການລະເບີດໄດ້ເຮັດໃຫ້ປາກພູເຂົາໄຟຂະຫຍາຍກວ້າງອອກຫຼາຍ. ປະຈຸບັນນີ້ ປາກພູເຂົາໄຟແມ່ນເຕັມໄປດ້ວຍນ້ຳ, ເຮັດໃຫ້ເປັນທະເລສາບທີ່ສວຍງາມອີກແຫ່ງໜຶ່ງ. ແຕ່ໃນວັນໜຶ່ງຂ້າງໜ້າ, ພູເຂົາໄຟໜ່ວຍນີ້ຈະຕ້ອງລະເບີດຂຶ້ນອີກ.



by bingbing CC-BY 2.0

ຂອງຫວານທີ່ນິຍົມໃນປະເທດຟີລິບປິນ ກໍ່ຄື ຂອງຫວານ ຮາໂລ ຮາໂລ, ເຂົາເຈົ້າຈະເອົານ້ຳກ້ອນທີ່ບົດແລ້ວປະສົມໃສ່ກັບນ້ຳຕານ, ໝາກຖົ່ວ ແລະ ນົມຂຸ້ນ. ຫຼັງຈາກນັ້ນ ກໍ່ເອົາໝາກໄມ້ທີ່ມີສີສັນສົດໃສວາງໃສ່ທາງເທິງ.

ຄວາມສະເໝີພາບຄືນຢ່າງຫຼວງຫຼາຍ ເຊິ່ງເຮັດໃຫ້ປະເທດຟີລິບປິນອ່ອນແອລົງ. ຕົວຢ່າງ: ອາເມຣິກາມີສິດເທົ່າທຽມກັບຄົນຟີລິບປິນໃນການນຳໃຊ້ຊັບພະຍາກອນທຳມະຊາດຈາກເກາະຕ່າງໆ. ຍິ່ງກວ່ານັ້ນ ກຸ່ມການເມືອງທີ່ແຕກຕ່າງກັນຍັງຄົງດຳເນີນການຕໍ່ສູ້ກັນ. ຍ້ອນເຫດນີ້ ປະເທດຈຶ່ງຈະເລີນຊ້າ.

ເຟີດີນານ ມາໂຄສ ໄດ້ກາຍມາເປັນປະທານາທິບໍດີເມື່ອທ້າຍປີ 1965. ໃນເບື້ອງຕົ້ນ ລາວເລີ່ມຕົ້ນປະຕິຮູບການສຶກສາ ແລະ ການກະສິກຳເປັນຢ່າງດີ. ແຕ່ໃນປີ 1972 ເມື່ອສະພາລັດຖະທຳມະນູນຕ້ອງການໃຫ້ ມາໂຄສ ອອກຈາກຕຳແໜ່ງ ລາວພັດປະຕິເສດ. ລາວທຳຕົນເປັນຜະເດັດການຂອງປະເທດ. ລາວຖືກສະໜັບສະໜູນຈາກໝູ່ເພື່ອນທີ່ຮັ່ງມີ ແລະ ການຊ່ວຍເຫຼືອຈາກສະຫະລັດອາເມຣິກາ ແລະກອງທັບຂີ້ໂກງ. ເປັນເວລາ 14 ປີ ທີ່ປະເທດອ່ອນແອ ຈົນກະທັ້ງ ມາໂຄສ ຖືກກົດດັນໃຫ້ອອກຈາກຫ້ອງການ. ຄົນທີ່ລວຍ ຍິ່ງຮັ່ງມີຂຶ້ນກວ່າເກົ່າ, ສ່ວນຄົນທີ່ທຸກຈົນ ຍິ່ງທຸກລົງກວ່າເກົ່າ ແລະຄົນໃດກໍ່ຕາມທີ່ຕໍ່ຕ້ານລາວຖືກຈັບຂັງຄຸກ ຫຼື ຖືກປະຫານຊີວິດ.

ເມື່ອປະຊາທິປະໄຕກັບຄືນມາໃນປີ 1986 ປະເທດກໍ່ເປັນໜີ້ມະຫາສານ. ການສຶກສາຫຼຸດລົງ ແລະ ລັດຖະບານກໍ່ເຕັມໄປດ້ວຍພະນັກງານຄົດໂກງ ຈຶ່ງເຮັດໃຫ້ປະເທດຊາດພັດທະນາຢ່າງຊ້າໆ.

# ເສດຖະກິດ

ໃນຊຸມປີ 1960 ເສດຖະກິດຂອງຟີລິບປິນ ເຂັ້ມແຂງສຸດໃນເອເຊຍ ເຊິ່ງມີພຽງຍີ່ປຸ່ນທີ່ເຂັ້ມແຂງກວ່າ. ແຕ່ພາຍໃຕ້ການປົກຄອງອັນຄົດໂກງຂອງ ເຟີດິນານ ມາໂຄສ ແຕ່ປີ 1965 ຫາ ປີ 1986 ຄວາມຮັ່ງມີຂອງປະເທດຖືກມາໂຄສ, ຄອບຄົວ ແລະ ເພື່ອນຝູງສູບເອົາເປັນຈຳນວນຫຼາຍ. ເມື່ອເຟີດິນານ ມາໂຄສ ໜີຈາກປະເທດ, ລາວກໍ່ເອົາເງິນຫຼາຍຕື້ໂດລາທີ່ໄດ້ຈາກການຄົດໂກງໄປນຳ. ເມຍຂອງລາວໃຊ້ເງິນຢ່າງຟຸມເຟືອຍ ເພື່ອຊື້ເຄື່ອງ, ນາງ ຊື້ ເກີບ 2,700 ຄູ່, ຖົງພາຍ 888 ໜ່ວຍ. ໃນຂະນະນັ້ນຄົນທຸກຈົນຖືກປະຖິ້ມ, ບໍ່ມີວຽກເຮັດ ແລະ ບໍ່ມີອາຫານພຽງພໍ ແລະປະເທດຊາດ ກໍ່ກຳລັງປຽວຢາບັນຫາຂອງຍຸກທີ່ມີການຄົດໂກງຢ່າງຊ້າໆ.

ຊາວຟີລິບປິນຫຼາຍລ້ານຄົນ ມີເຖິງ 8% ຂອງພົນລະເມືອງທັງໝົດໄດ້ຍ້າຍໄປສູ່ປະເທດຕາເວັນຕົກ ເພື່ອຊອກວຽກທີ່ມີລາຍຮັບສູງກວ່າແລ້ວສົ່ງເງິນກັບເມືອເຮືອນໃຫ້ຄອບຄົວຂອງພວກເຂົາ. ນີ້ເປັນການສະໜອງລາຍໄດ້ແກ່ຟີລິບປິນ. ແຕ່ຈາກການໄດ້ຮັບລາຍໄດ້ອັນຫຼວງຫຼາຍແລະຍາວນານນີ້ ແທນທີ່ຈະເປັນການຊ່ວຍເຫຼືອປະເທດຂອງພວກເຂົາພັດທະນາເສດຖະກິດ ແລະ ລັດຖະບານໃຫ້ເຂັ້ມແຂງ, ຄົນງານທີ່ມີທັກສະເຫຼົ່ານັ້ນ ພັດຊ່ວຍປະເທດອື່ນທີ່ຮັ່ງມີກວ່າ. ຄອບຄົວຂອງພວກເຂົາມີລາຍໄດ້ຫຼາຍຂຶ້ນ ແຕ່ກໍ່ຕ້ອງປະສົບຄວາມທຸກໃຈເມື່ອແມ່ ຫຼື ພໍ່ໄປເຮັດວຽກຢູ່ໄກເປັນເວລາຫຼາຍປີ. ໃນຂະນະທີ່ມີວິກິດການເສດຖະກິດຂະຫຍາຍໄປທົ່ວໂລກ, ຄົນງານທີ່ໄປເຮັດວຽກຢູ່ຕ່າງປະເທດກໍ່ໄດ້ປະເຊີນກັບບັນຫາໃໝ່ຄື: ພວກເຂົາເສຍວຽກທີ່ຕ່າງປະເທດ ແລະໄດ້ກັບມາຟີລິບປິນ, ແຕ່ເມື່ອກັບມາບ້ານເກີດ ບາງຄົນກໍ່ບໍ່ມີວຽກງານຈະເຮັດຄືຕອນທີ່ພວກເຂົາຈາກໄປ.



Themanilaxperience CC-BY-SA 3.0

ມະນີລາ, ເມືອງຫຼວງຂອງປະເທດຟີລິບປິນ ແມ່ນເມືອງໜຶ່ງທີ່ໃຫຍ່ທີ່ສຸດໃນໂລກ. ນອກຈາກນີ້ແລ້ວຍັງເປັນເມືອງທີ່ມີຜູ້ຄົນແອອັດຫຼາຍທີ່ສຸດໃນໂລກດ້ວຍ, ສະເລ່ຍແມ່ນ 43,000 ຄົນຕໍ່ກິໂລແມັດມົນທົນ.



ໃນປະເທດຟີລິບປິນ ພູເຂົາໄຟບໍ່ແມ່ນໄພອັນຕະລາຍທາງທຳມະຊາດແຕ່ຢ່າງດຽວເທົ່ານັ້ນ. ຍັງມີພາຍຸເຂດຮ້ອນທີ່ໃຫຍ່ຫຼາຍ ເພິ່ນເອີ້ນວ່າ ພາຍຸໃຕ້ຝຸ່ນ, ເຊິ່ງມັກຈະພັດມາຈາກມະຫາສະໝຸດປາຊີຟິກ. ທຸກໆປີ ພາຍຸໃຕ້ຝຸ່ນເຫຼົ່ານີ້ຈະພັດຜ່ານປະເທດຟີລິບປິນ. ພາຍຸໃຕ້ຝຸ່ນທີ່ເຫັນຢູ່ໃນພາບນີ້ມີຄວາມກວ້າງເຖິງ 300 ກິໂລແມັດ ແລະ ພັດດ້ວຍຄວາມໄວ 280 ກມ ຕໍ່ຊົ່ວໂມງ.

# ເຈົ້າສາມາດອ່ານເພີ່ມ ເຕີມໄດ້ໃນປຶ້ມຫົວນີ້!



**ກຸ່ມປະເທດ ອາຊຽນ**

ຂຽນ: ລຸງຊາຊ່າ, ແຕ້ມ: ເຊັ່ງໄຊ ກູ່ຊົ່ງ ແລະ ກົ່ງຊົ່ວ ເຊັ່ງລີ, ແປ: ໄຜ່ຫວານ, ໂຣຊັນນາ ບໍລິການແປພາສາ.
ກວດແກ້: ບັນນາທິການ ອ້າຍໜູນ້ອຍ, ຈັດພິມໂດຍ: ສຳນັກພິມ ອ້າຍໜູນ້ອຍ, ຫຼວງພະບາງ.
ທະບຽນອະນຸຍາດ: ລທບ 370/ພຈ08112011. ພິມຄັ້ງທີ1
ພິມທີ່ ໂຮງພິມ ສີສະຫວາດ, ວຽງຈັນ, 2011. ຂະໜາດ 19x26ຊມ, ຈຳນວນ 6000 ຫົວ
ສະຫງວນລິຂະສິດບົດຂຽນ © 2012 ລຸງຊາຊ່າ, ສະຫງວນລິຂະສິດຮູບແຕ້ມ © 2012 ອ້າຍໜູນ້ອຍ

ບາງຮູບພາບໃນປຶ້ມຫົວນີ້ ໄດ້ມາຈາກ www.wikipedia.com. ບາງຮູບເຂົາເຈົ້າບໍ່ຖືລິຂະສິດ ບາງຮູບກໍ່ອະນຸຍາດໃຫ້ໃຊ້ຕາມລະບຽບຂອງອົງການ Creative Commons. ລາຍລະອຽດທ່ານສາມາດເຂົ້າຊົມ http://creativecommons.org/licenses/bysa/3.0/ (ຫຼື 2.5 ຫຼື 2.0, ຫຼື ຕາມທີ່ໄດ້ຂຽນໄວ້ແຕ່ລະຮູບ). ພວກເຮົາຂໍຂອບໃຈນຳບັນດານັກຖ່າຍຮູບທັງຫຼາຍ ທີ່ເຮັດວຽກຢ່າງໜັກ ເພື່ອໃຫ້ຜູ້ຄົນໄດ້ນຳໃຊ້ຢ່າງກວ້າງຂວາງ. ໜ້າປົກ: ຄວາຍ: PaulRudd CC-BY-SA 3.0; ນັກຟ້ອນ: Frank Wouters, CC-BY-SA 2.0; ປະຕູໄຊ: Slug78 CC-BY-SA 2.0; ສຸເລົ່າ: Azreey CC-BY-SA 3.0

**The Countries of ASEAN,** with non-fiction text and story selection by Sasha Alyson, Story illustrations by Sengsay Khousong and Kongsoua Sengli. Published by Big Brother Mouse, Luang Prabang, Lao PDR.


ກຸ່ມປະເທດ
ອາຊຽນ
ໂດຍ: ລຸງຊາຊ່າ
ມຽນມ້າ
ລາວ
ໄທ
ຫວຽດນາມ
ກຳປູເຈຍ
ຟີລິບປິນ
ມາເລເຊຍ
ບຣູໄນ
ສິງກະໂປ
ອິນໂດເນເຊຍ
ປະຫວັດສາດ • ວັດທະນະທຳ • ພູມມີປະເທດ • ສາສະໜາ • ນິທານ